ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑໑ 🕮 ໑໑໑໑໑

ນະຄອນຫຼວງວຽງຈັນ

ເລກທີ 0888 /ຈນວ.

ນະຄອນຫຼວງວຽງຈັນ, ວັນທີ 09 SEP 2016

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາ ເຂດແຄມຂອງ ບໍລິເວນຫາດດອນຈັນ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19 ແລະ 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ ວິໄສທັດ ແລະ ແຜນຜັງການພັດທະນາຕົວເມືອງວຽງຈັນ ໄລຍະຮອດ 2030, ຊຶ່ງມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫລວງວຽງຈັນ ກຳນົດໄວ້;
- ອີງຕາມຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 52/ນຍ, ລົງວັນທີ 10 ມິຖຸນາ 2010;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມ ຄັ້ງປະຖົມມະລຶກ ຂອງສະພາປະຊາຊົນ ນວ ຄັ້ງວັນທີ 18-20 ພຶດສະພາ 2016 ແລະ ແລະ ມະຕິຕົກລົງ ຂອງຄະນະປະຈຳສະພາ ປະຊາຊົນ ນວ ສະບັບເລກທີ 009/ສພ.ນວ, ລົງວັນທີ 22 ສິງຫາ 2016;
- ອີງຕາມ ໜັງສືສະເໜີ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນວ ສະບັບເລກທີ 3118/ຍທຂ.ນວ, ລົງວັນທີ 2 ກັນຍາ 2016.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດແຜນຜັງ, ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການພັດທະນາ ເຂດແຄມຂອງ ບໍລິເວນຫາດດອນຈັນ ນະຄອນຫຼວງວຽງຈັນ, ເພື່ອເຮັດໃຫ້ເຂດດັ່ງກ່າວ ກາຍເປັນເຂດພັດທະນາ ທີ່ມີຄຸນປະໂຫຍດສູງສຸດ ແລະ ຍືນຍົງ, ສອດຄ່ອງກັບພູມມິທັດ, ປົກປັກຮັກສາຄູກັນນ້ຳ (ຕະຝັ່ງເຈື່ອນ) ຢ່າງຖາວອນ, ອະນຸລັກຮັກສາລະບົບນິເວດວິທະຍາ ຂອງຫາດຊາຍດອນຈັນ ແລະ ສາມາດຮັບມືກັບການປ່ຽນແປງດິນຟ້າອາກາດ ໃນອະນາຄົດ.

**ມາດຕາ 2. ເຂດແຄມຂອງ ບໍລິເວນຫາດດອນຈັນ**

ເຂດແຄມຂອງ ບໍລິເວນຫາດດອນຈັນ ແມ່ນພື້ນທີ່ຊາຍຝັ່ງນໍ້າຂອງພິເສດແຫ່ງໜຶ່ງ ຂອງນະຄອນຫລວງວຽງຈັນ, ມີຄວາມຍາວຫລາຍກວ່າ 12 ກິໂລແມັດ, ຊຶ່ງປະກອບດ້ວຍ: ນ່ານນໍ້າຂອງ, ເຂດຫາດຊາຍດອນຈັນ, ເຂດຄູກັນນໍ້າ, ເຂດສວນສາທາລະນະ ແລະ ກິດຈະການຕ່າງໆອ້ອມຮອບ. ເຂດແຄມຂອງ ບໍລິເວນຫາດດອນຈັນ ຍັງຈັດເປັນເຂດຊາຍຝັ່ງແມ່ນໍ້າຂອງທີ່ ເປັນຈຸດເດັ່ນ ຂອງຕົວເມືອງ, ໂດຍຈະຖືກພັດທະນາ, ນຳໃຊ້ ແລະ ຄຸ້ມຄອງຕາມແຜນຜັງກວມລວມ, ໃຫ້ມີປະສິດທິຜົນ, ມີຄວາມຍືນຍົງ, ສອດຄ່ອງກັບທົ່ວທັດທຳມະຊາດ ແລະ ວັດທະນະທຳຊາວເມືອງວຽງຈັນສະໄໝປະຍຸກ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງຕໍ່ໄປນີ້:

1. **ການດຳເນີນກິດຈະການກໍ່ສ້າງຕາມ ເຂດແຄມຂອງ ບໍລິເວນຫາດດອນຈັນ ໝາຍເຖິງ** ການກຳນົດໂຄງການລົງທຶນຂອງລັດ ຫຼື ເອກະຊົນ ທີ່ດຳເນີນການຈັດຕັ້ງປະຕິບັດວຽກງານກໍ່ສ້າງ ເຊັ່ນ: ການສຳຫຼວດ,ການກໍ່ສ້າງ, ການສ້ອມແປງ, ການຂະຫຍາຍ, ການດັດແປງ, ການຕໍ່ເຕີມ, ການຖົມດິນ, ການຕັ້ງຮ້ານຂາຍເຄື່ອງ, ຕິດຕັ້ງປ້າຍໂຄສະນາ, ການທັບມ້າງ, ການຄຸ້ມຄອງ, ການກວດກາ ແລະ ຄວບຄຸມ ໂຄງການກໍ່ສ້າງກິດຈະການ ທາງນໍ້າ.
2. **ການປ່ຽນແປງສະພາບທຳມະຊາດ ຂອງ ເຂດແຄມຂອງ ບໍລິເວນຫາດດອນຈັນ ໝາຍເຖິງ** ການປ່ຽນແປງສະພາບຕະຝັ່ງ, ພື້ນດິນ, ແລວນໍ້າໄຫຼ ແລະ ສະພາບນິເວດວິທະຍາອື່ນໆ ໃນເຂດແຄມຂອງ ດ້ວຍການກະທຳຕ່າງໆຂອງຄົນເຊັ່ນ: ການຂຸດ, ການຈົກ, ດູດເອົາຫີນແຮ່ຊາຍ ແລະ ດິນດຳ, ການຕໍ່ເຕີມຕະຝັ່ງດ້ວຍການຖົມດິນ, ຖົມຫີນ, ການເທເບຕົງ, ການເຮັດຊານ, ການຕອກເສົາເຂັມ, ການປ່ອຍນໍ້າເປື້ອນ ແລະ ດ້ວຍການປ່ຽນແປງເອງຕາມທຳມະຊາດຂອງແຫຼ່ງນໍ້າ.
3. **ກິດຈະກຳຢູ່ໃນນ່ານນໍ້າ ໝາຍເຖິງ** ການຈັດກິດຈະກຳຕ່າງໆ ຢູ່ໃນນ່ານນໍ້າຂອງ ທີ່ຈັດຂຶ້ນໃນຂອບເຂດພື້ນທີ່ເຂດແຄມຂອງ ບໍລິເວນຫາດດອນຈັນ ແຕ່ ບ້ານດ່ານຄຳ, ເມືອງສີໂຄດຕະບອງ ຫາ ຫຼັກ 3 ບ້ານວັດນາກ, ເມືອງສີສັດຕະນາກ ເຊັ່ນ: ການຊວງເຮືອປະເພນີ, ການເດີນເຮືອທ່ອງທ່ຽວ, ການກໍ່ສ້າງເຮືອແພ, ການຕິດຕັ້ງປ້ຳນໍ້າ,ການເດີນເຮືອໂດຍສານ,ເຮືອສ່ວນຕົວ (ເຮືອກາບພື້ນເມືອງ,ເຮືອເຈັດສະກີ ແລະ ເຮືອ ອື່ນໆ...)
4. **ກິດຈະກຳຢູ່ເທິງໜ້າດິນ ໝາຍເຖິງ** ການຈັດກິດຈະກຳທຸກປະເພດ ຢູ່ເທິງຫາດຊາຍ, ເຂດພັກລຸ່ມ, ເຂດສັນຄູກັນນໍ້າ.
5. **ເຂດສັນຄູກັນນໍ້າ (ຄູກັນເຈື່ອນ) ໝາຍເຖິງ** ຂອບເຂດພື້ນທີ່ການກໍ່ສ້າງກິດຈະການປ້ອງກັນຕະຝັ່ງເຈື່ອນຢູ່ພັກທີໜຶ່ງ ເຊິ່ງກວມເອົາເສັ້ນທາງທີ່ເປັນສັນຄູກັນນໍ້າ,ສວນສາທາລະນະ ແລະ ເຂດສະຫງວນຢູ່ເທິງໜ້າດິນຂອງເຂດແຄມຂອງ ບໍລິເວນຫາດດອນຈັນ
6. **ເຂດພັກລຸ່ມຂອງຄູກັ້ນນໍ້າ ໝາຍເຖິງ** ຂອບເຂດພື້ນທີ່ການກໍ່ສ້າງກິດຈະການປ້ອງກັນຕະຝັ່ງເຈື່ອນຢູ່ໃນພັກລຸ່ມນັບຈາກສັນຄູກັນນໍ້າລົງໄປ ຫາ ຫາດຊາຍ (ເຂດຄ້ອຍຊັນ ແລະ ເຂດຕີນຄັນຄູ).
7. **ເຂດນ່ານນໍ້າ ໝາຍເຖິງ** ຂອບເຂດທີ່ກວມເອົາພື້ນທີ່ຈາກຈຸດລະດັບນໍ້າຂອງ ຕໍ່າສຸດ ຫຼື ສູງສຸດ ຂອງເຂດແຄມຂອງ ບໍລິເວນຫາດດອນຈັນ ອອກໄປຫາຊາຍແດນ ລາວ - ໄທ.
8. **ໂຄງການກໍ່ສ້າງເທິງເຂດນ່ານນໍ້າຂອງ ໝາຍເຖິງ** ໂຄງການທັງຂອງພາກລັດ ຫຼື ເອກະຊົນ ທີ່ດຳເນີນກິດຈະການກໍ່ສ້າງຢູ່ເທິງນ່ານນໍ້າ, ຢູ່ໃນພື້ນນໍ້າ, ຢູ່ຕາມແຄມຕະຝັ່ງນໍ້າຂອງ ບໍລິເວນຫາດດອນຈັນ ເຊັ່ນ: ການກໍ່ສ້າງເສັ້ນທາງ ຂົນສົ່ງທາງນໍ້າ, ກໍ່ສ້າງທ່າທຽບເຮືອ, ແພທຽບເຮືອ, ຂຸດຄອງເດີນເຮືອ ແລະ ຮ້ານອາຫານເຮືອແພ.
9. **ເຂດຫາດຊາຍ ໝາຍເຖິງ** ພື້ນທີ່ຫາດຊາຍ ທີ່ເກີດຂຶ້ນ ຈາກ ການສະສົມຂອງຕະກອນ ໃນທຳມະຊາດ ເຊັ່ນ: ຫີນແຮ່,ຊາຍ,ດິນດຳ ແລະ ອື່ນໆ

**ມາດຕາ 4. ຂອບເຂດນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງຂອງພັກ, ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ເຂດແຄມຂອງ ບໍລິເວນຫາດດອນຈັນ

## ໝວດທີ 2
## ທີ່ຕັ້ງ, ຂອບເຂດ ແລະ ອົງປະກອບ

**ມາດຕາ 5. ທີ່ຕັ້ງ**

ທີ່ຕັ້ງຂອງເຂດແຄມຂອງ ບໍລິເວນຫາດດອນຈັນ ຕັ້ງຢູ່ 3 ເມືອງ ແລະ ປະກອບດ້ວຍ 21 ບ້ານ ດັ່ງນີ້:

5.1 ເມືອງສີໂຄດຕະບອງປະກອບດ້ວຍ: ບ້ານດ່ານຄຳ, ບ້ານເກົ້າລ້ຽວ, ບ້ານສີຊົມຊື່ນ, ບ້ານສີບຸນເຮືອງ, ບ້ານຍະພະ, ບ້ານສີໄຄທ່າ, ບ້ານເມືອງວາທ່າ, ບ້ານອາກາດ, ບ້ານວັດໄຕໃຫຍ່ທ່າ, ບ້ານວັດໄຕນ້ອຍທ່າ, ບ້ານໜອງປາໄນ, ບ້ານອຸໂມງ, ບ້ານຂຸນຕາ ແລະ ບ້ານສີຖານເໜືອ;

5.2 ເມືອງຈັນທະບູລີ ປະກອບດ້ວຍ : ບ້ານວັດຈັນ, ບ້ານມີໄຊ ແລະ ບ້ານຊຽງຍືນ;

5.3 ເມືອງສີສັດຕະນາກປະກອບດ້ວຍ: ບ້ານເພຍວັດ, ບ້ານຫາດຂາວ,ບ້ານບຶງຂະຫຍອງ ແລະ ບ້ານວັດນາກ.

**ມາດຕາ 6. ຂອບເຂດ**

ຂອບເຂດຂອງ ເຂດແຄມຂອງ ບໍລິເວນຫາດດອນຈັນ ແມ່ນລຽບຕາມແຄມແມ່ນ້ຳຂອງຕາມເສັ້ນທາງເທິງສັນຄູກັນນ້ຳ ອອກໄປຫານ່ານນ້ຳຂອງ, ຕັ້ງແຕ່ ບ້ານດ່ານຄຳ ເມືອງສີໂຄດຕະບອງລົງມາຕາມທິດນ້ຳໄຫຼ ຫາ ບ້ານວັດນາກ ຫຼັກ 3 ເມືອງສີສັດຕະນາກ ແລະ ກວມເອົາພື້ນທີ່ ສວນສາທາລະນະເຈົ້າອານຸວົງ ແລະ ກວມເອົາເນື້ອທີ່ບາງສ່ວນຂອງ ບ້ານ ແລະ ເມືອງ ທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7. ອົງປະກອບ**

ອົງປະກອບຫຼັກ ຂອງ ເຂດແຄມຂອງ ບໍລິເວນຫາດດອນຈັນ ແມ່ນປະກອບດ້ວຍ: ເຂດນ່ານນ້ຳຂອງ, ຫາດຊາຍ, ເຂດພັກລຸ່ມຂອງຄູກັນນ້ຳ (ຕີນຄັນຄູ), ເຂດສັນຄູກັນນ້ຳ, ເສັ້ນທາງລຽບສັນຄູກັນນ້ຳ, ພື້ນທີ່ສວນສາທາລະນະເຈົ້າອານຸວົງ, ບັນດາຊັບພະຍາກອນ ທຳມະຊາດທີ່ມີຊີວິດ ແລະ ບໍ່ມີຊີວິດ ທີ່ນອນໃນພື້ນທີ່ ແລະ ສິ່ງກໍ່ສ້າງສາທາລະນຸປະໂຫຍດ ທັງໝົດໃນຂອບເຂດແຄມຂອງ ແລະ ບໍລິເວນຫາດດອນຈັນ.

## ໝວດທີ 3
## ການຈັດສັນ ແລະ ພັດທະນາພື້ນທີ່ ເຂດແຄມຂອງ ບໍລິເວນຫາດດອນຈັນ

**ມາດຕາ 8. ການຈັດສັນ ແລະ ພັດທະນາພື້ນທີ່ຢູ່ເຂດນ່ານນ້ຳ**

ເຂດນ່ານນ້ຳ ແຕ່ບ້ານດ່ານຄຳ ເມືອງສີໂຄດຕະບອງ ຫາ ຫຼັກ 3 ບ້ານວັດນາກ ເມືອງສີສັດຕະນາກ ແມ່ນຈັດສັນເປັນເຂດກິດຈະກຳກິລາເທິງນ່ານນ້ຳ, ເຊັ່ນ: ການຊ່ວງເຮືອ,ກິລາເຈັດສະກີ ເສັ້ນທາງເດີນເຮືອທ່ອງທ່ຽວ ແລະ ຂົນສົ່ງຜ່ານ, ການນຳໃຊ້ເຮືອໃນຊີວິດປະຈຳວັນຂອງປະຊາຊົນ.

**ມາດຕາ 9. ການຈັດສັນພື້ນທີ່ຫາດຊາຍ**

ຈັດສັນພື້ນທີ່ຫາດຊາຍ ແລະ ແຄມນໍ້າ ໃຫ້ເປັນສະຖານທີ່ບໍລິການ ແລະ ທ່ອງທ່ຽວແຄມນາທີ ຕາມລະດູການ, ເຊັ່ນ: ເປັນສວນດອກໄມ້ປະດັບລະດູແລ້ງ, ບ່ອນຫລິ້ນກິລາຫາດຊາຍ, ປະຕິມະກຳຊາຍ, ຈັດງານປະເພນີ ຫົດສົງນໍ້າມອນຊິນ (ໃນງານບຸນກຸດສົງການ), ເປັນບ່ອນຊົມທິວທັດທຳມະຊາດຫາດຊາຍ, ຊົມຕາເວັນຕົກດິນ ແລະ ອື່ນໆ.

**ມາດຕາ 10. ການຈັດສັນ ແລະ ພັດທະນາພື້ນທີ່ພັກລຸ່ມ (ພື້ນຖຸກັນເຈື່ອນ)**

ເຂດພັກລຸ່ມເລີ່ມແຕ່ ຈຸດອີງການແມ່ນໍ້າຂອງສາກົນ (MRC) ຈຸດພິກັດ (N:17 ̊57’57.4”; E:102°36’49.8”) ລົງໄປຮອດຈຸດຕໍ່ໜ້າໂຮງແຮມແລນມາກ ຈຸດພິກັດ (N:17°56’ 38.2”; E:102° 36’58.1”) ສາມາດນຳໃຊ້ຕາມລະດູການ, ໂດຍຈັດສັນເປັນຮ້ານຂາຍເຄື່ອງທີລະລຶກ (Kiosk), ອາຫານເບົາ, ສະຖານທີ່ອອກກຳລັງກາຍ, ບ່ອນຈັດກິດຈະກຳສຳລັບເດັກ ແລະ ບ່ອນຈອດລົດ ສຳລັບລົດຂະໜາດເບົາ, ລົດຈັກ ແລະ ລົດຖີບ; ການປຸກສ້າງ: ຄວາມສູງຂອງສິ່ງປຸກສ້າງ ແມ່ນໃຫ້ຕໍ່າກວ່າສັນຄູກັນນໍ້າ ແລະ ພ້ອມທັງບໍ່ໃຫ້ແອອັດ (ລາຍລະອຽດ ແມ່ນປະຕິບັດຕາມເຕັກນິກຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ ຈະໄດ້ກວດກາໃນເວລາອອກອະນຸຍາດການປຸກສ້າງ).

**ມາດຕາ 11. ການຈັດສັນ ແລະ ພັດທະນາພື້ນທີ່ຢູ່ເຂດປ້ອງກັນຕະຝັ່ງເຈື່ອນ ແລະ ເສັ້ນທາງຄູກັນນໍ້າ**

11.1 ເຂດປ້ອງກັນຕະຝັ່ງເຈື່ອນ ຫລື ເຂດຄ້ອຍຊັນ (ຈາກເຂດພື້ນຕີນ ຫາ ສັນຄູ) ໃຫ້ຮັກສາກິດຈະການກໍ່ສ້າງໄວ້ດັ່ງເດີມ (ບໍ່ໃຫ້ມີການພັດທະນາເພີ່ມເຕີມ);

11.2 ເຂດສັນຄູກັນນໍ້າ ທີ່ໄດ້ກໍ່ສ້າງເປັນເສັ້ນທາງປູຢາງອັດສະຟານ ແຕ່ ສາມແຍກປາກປາສັກຫາ ຫຼັກ 3 ບ້ານວັດນາກ ແລະ ເສັ້ນທາງເບຕົງ ແຕ່ 3 ແຍກປາກປາສັກ ຫາ ບ້ານສີບຸນເຮືອງ ເມືອງສີໂຄດຕະບອງ, ເຂດນີ້ ແມ່ນຈັດສັນໃຫ້ສະເພາະແຕ່ລົດແລ່ນ, ສ່ວນຂອບທາງແລະທາງຍ່າງ ໃຫ້ໃຊ້ເປັນທາງຍ່າງເທົ່ານັ້ນ.

**ມາດຕາ 12. ການຈັດສັນພື້ນທີ່ສວນສາທາລະນະເຈົ້າອານຸວົງ**

ການຈັດສັນພື້ນທີ່ສວນສາທາລະນະເຈົ້າອານຸວົງ ໃຫ້ປະຕິບັດດັ່ງນີ້:

12.1 ລານອາເນກປະສົງເຂດຕໍ່ໜ້າວັດຈັນ ແມ່ນຈັດສັນເປັນສະຖານທີ່ຂາຍເຄື່ອງທີ່ລະນຶກ ຜະລິດຕະພັນດ້ານຫັດຖະກຳ ແລະ ວັດທະນະທຳລາວ,ເຄື່ອງທົ່ວໄປ,ສະຖານທີ່ທ່ອງທ່ຽວກາງຄືນ ແລະ ກິດຈະກຳຕ່າງໆ ເພື່ອຮັບໃຊ້ສັງຄົມ ເປັນຕົ້ນ ການທ່ອງທ່ຽວ ແລະ ງານບຸນທາງ ວັດທະນາທຳ-ປະເພນີ;

12.2 ສ່ວນດ້ານຫລັງທີ່ຕິດກັບຮູບປັ້ນຫລໍ່ເຈົ້າອານຸວົງ ແມ່ນຈັດສັນເປັນບ່ອນຂາຍທູບທຽນ ແລະ ດອກໄມ້,ສຳລັບດ້ານທີ່ຕິດກັບຖະໜົນຟ້າງຸ່ມ ດ້ານຫຼັງຫໍຄຳ ໃຫ້ຈັດເປັນສວນດອກໄມ້,ບ່ອນອອກກຳລັງກາຍ,ຮ້ານຂາຍປຶ້ມ ແລະ ຮ້ານອາຫານເບົາ;

12.3 ເຂດເຊື່ອມຕໍ່ ສວນເດີ່ນເຈົ້າອະນຸວົງ-ຫໍຄຳ (1 ເຮັກຕາ) ໃຫ້ສ້າງເປັນສວນດອກໄມ້ເປັນປ່າດົງ ຂອງສຳນັກງານປະທານປະເທດ,ສ່ວນຊັ້ນໃຕ້ດິນແມ່ນສ້າງເປັນລານຈອດລົດເບົາ;

12.4 ທາງ ຂຶ້ນ-ລົງ ຫຼື ເຂົ້າ-ອອກ ຂອງພະທະ ຫາ ຫາດດອນຈັນ ແມ່ນກຳນົດເອົາ ຢູ່ ຈຸດ 3 ແຍກປາກປ່າສັກ ແລະ ຈຸດປາກປະຕູນໍ້າ ໃກ້ກັບຮູບປັ້ນຫຼໍ່ຮູບພະເຈົ້າອານຸວົງ (ດ້ານໃຕ້);

12.5 ສຳລັບທາງຂຶ້ນ-ລົງ ຫຼື ເຂົ້າ-ອອກ ລົງຂອງມອນຊິນໄດ້ກຳນົດໄວ້ ທຸກໆ 100 ແມັດ.

**ມາດຕາ 13. ການພັດທະນາເຂດອ້ອມຂ້າງຂອງ ເຂດແຄມຂອງ ບໍລິເວນທາດດອນຈັນ**

ສິ່ງປຸກສ້າງເບື້ອງກ້ຳຊ້າຍ ແຕ່ ເຫນືອ ຫາ ໃຕ້ ຂອງທຸກຄິວເຮືອນ ຈາກເກົ້າລ້ຽວ ຫາ ໂຮງຮຽນການຊ່າງລາວເຢຍລະມັນ ໃຫ້ພັດທະນາເປັນເຂດບໍລິການທ່ອງທ່ຽວ: ໂຮງແຮມ, ຮ້ານອາຫານ,... ຕາມແຜນຜັງສະເພາະ ຂອງທາງການກຳນົດ.

## ໝວດທີ 4
## ການຄຸ້ມຄອງ ແລະ ກວດກາ ເຂດແຄມຂອງ ບໍລິເວນທາດດອນຈັນ

**ມາດຕາ 14. ການຄຸ້ມຄອງ**

14.1 ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກພັດທະນາ, ນຳໃຊ້ກິດຈະການໃດຫນຶ່ງໃນເຂດແຄມຂອງ ບໍລິທາດດອນຈັນ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

14.2 ການຄຸ້ມຄອງເຂດແຄມຂອງ ບໍລິເວນທາດດອນຈັນ ປະຕິບັດ ຕາມລະບຽບປະຕູດຽວ ພາຍໃຕ້ການຊີ້ນຳ ຂອງ ອົງການປົກຄອງນະຄອນຫລວງວຽງຈັນ (ເຈົ້າຄອງນະຄອນຫລວງວຽງຈັນ).

**ມາດຕາ 15. ອົງການຄຸ້ມຄອງ**

ອົງການຄຸ້ມຄອງເຂດແຄມຂອງ ບໍລິເວນທາດດອນຈັນ ລວມມີ:

15.1ອົງການປົກຄອງນະຄອນຫຼວງວຽງຈັນ;

15.2 ພະແນກໂຍທາທິການແລະຂົນສົ່ງນະຄອນຫຼວງວຽງຈັນ,ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງສີໂຄດຕະບອງ, ເມືອງຈັນທະບູລີ ແລະ ເມືອງສີສັດຕະນາກ;

15.3 ອົງການປົກຄອງເມືອງສີໂຄດຕະບອງ, ເມືອງຈັນທະບູລີ ແລະ ເມືອງສີສັດຕະນາກ;

15.4 ອົງການປົກຄອງບ້ານ ທີ່ໄດ້ກຳນົດຢູ່ໃນມາດຕາທີ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງອົງການປົກຄອງນະຄອນຫຼວງວຽງຈັນ**

16.1 ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ຮັບຜິດຊອບຕໍ່ຜົນໄດ້ ແລະ ຜົນເສຍ ຂອງລັດຖະບານ ໃນການພັດທະນາເຂດດັ່ງກ່າວ;

16.2 ຄຸ້ມຄອງ, ກວດກາ ແລະ ຄວບຄຸມ ການອະນຸມັດປຸກສ້າງ, ການພັດທະນາແຕ່ລະຈຸດຂອງເຂດແຄມຂອງ ແລະ ບໍລິເວນທາດດອນຈັນ,ຍ້ອງຍໍ ແລະ ລົງວິໄນ ຕໍ່ທຸກພາກສ່ວນທີ່ດຳເນີນກິດຈະການ ແລະ ທຸລະກິດ ໃນເຂດດັ່ງກ່າວ;

16.3 ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ແລະ ບັນຫາ ການຄຸ້ມຄອງ ເຂດແຄມຂອງ ບໍລິເວນທາດດອນຈັນ ໃຫ້ລັດຖະບານຊາບເປັນໄລຍະ;

16.4 ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ລັດຖະບານ.

**ມາດຕາ 17. ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງສີໂຄດຕະບອງ, ເມືອງຈັນທະບູລີ ແລະ ເມືອງສີສັດຕະນາກ**

17.1 ຮັບຜິດຊອບໂດຍກົງ ທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້, ກົດໝາຍ ແລະ ນິຕິກຳອື່ນໆຂອງລັດ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ການພັດທະນາ ເຂດແຄມຂອງ ບໍລິເວນທາດດອນຈັນ;

17.2 ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດທັງຫມົດ ຕໍ່ກິດຈະການກໍ່ສ້າງ ແລະ ກິດຈະກໍາຕ່າງໆ ໃນ ຂອບເຂດແຄມຂອງ ບໍລິເວນທາດດອນຈັນ ພ້ອມ ນໍາສະເຫນີການສ້ອມແປງ,ຟື້ນຟູຜົນເສຍຫາຍ ຢ່າງທັນການ;

17.3 ປະສານສົມທົບກັບ ທຸກພາກສ່ວນດໍາເນີນທຸລະກິດ ທີ່ເຫັນວ່າມີການລະເມີດຂໍ້ຕົກລົງສະບັບນີ້, ກົດ ໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ພ້ອມທັງແນະນໍາວິທີການແກ້ໄຂບັນຫາ ໃນຂອບເຂດ ແຄມຂອງ ແລະ ບໍລິເວນທາດດອນຈັນ;

17.4 ຄົ້ນຄວ້າ ນໍາສະເຫນີ ອົງການປົກຄອງນະຄອນຫລວງວຽງຈັນ ເພື່ອ ອອກອະນຸຍາດ ຫລື ປິດ ກິດຈະການ ການດໍາເນີນໂຄງການ ແລະ ກິດຈະກໍາຕ່າງໆ;

17.5 ລາຍງານສ່ອງແສງ ເປັນປົກກະຕິ ໃຫ້ກະຊວງໂຍທາທິການແລະຂົນສົ່ງ,ອົງການປົກຄອງນະຄອນ ຫຼວງວຽງຈັນ ຮັບຊາບ ເພື່ອຊີ້ນໍາ ກ່ຽວກັບ ຜົນໄດ້, ຜົນເສຍ ໃນການຄຸ້ມຄອງ,ການພັດທະນາ ເຂດແຄມຂອງ ບໍລິເວນທາດດອນຈັນ;

17.6 ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງສີໂຄດຕະບອງ,ເມືອງຈັນທະບູລີ ແລະ ເມືອງສີສັດຕະ ນາກ ມີໜ້າທີ່ແລະສິດ ໃນການສ້າງລະບຽບແບບແຜນ ໃນການຄຸ້ມຄອງເຂດແຄມຂອງ ບໍລິເວນ ທາດດອນຈັນ,ຕິດຕາມກວດກາ ການລະເມີດຂໍ້ຕົກລົງສະບັບນີ້,ກົດໝາຍ ແລະ ລະບຽບການ ໃນ ຂອບເຂດເມືອງຂອງຕົນ ແລ້ວ ລາຍງານໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ ວຽງຈັນ ຊາບ ເພື່ອດໍາເນີນການແກ້ໄຂ ແລະ ປະຕິບັດໜ້າທີ່ ແລະ ສິດ ຕາມການມອບໝາຍຂອງ ພະແນກໂຍທາທິການແລະຂົນສົ່ງ ນະຄອນຫຼວງວຽງຈັນ.

**ມາດຕາ 18. ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງ**

18.1 ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ກົດຫມາຍ ແລະລະບຽບການອື່ນໆ ໃນຂອບເຂດພື້ນທີ່ຂອງຕົນ;

18.2 ຕິດຕາມ, ກວດກາ ແລະ ຕັກເຕືອນ ຜູ້ລະເມີດ ລະບຽບການຄຸ້ມຄອງເຂດແຄມຂອງ ໃນຂອບເຂດ ເມືອງຂອງຕົນເອງ ແລ້ວລາຍງານຕໍ່ອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອແກ້ໄຂ ຢ່າງທັນ ການ;

18.3 ປຸກລະດົມຂົນຂວາຍ ປະຊາຊົນ ໃນການຄຸ້ມຄອງ ແລະ ອະນາໄມ ເຂດແຄມຂອງ ແລະ ບໍລິເວນ ທາດດອນຈັນ ໃນຂອບເຂດພື້ນທີ່ຂອງຕົນ;

18.4 ເຮັດວຽກງານ ປກຊ-ປກສ ໃຫ້ເຂດດັ່ງກ່າວ ມີຄວາມສະຫງົບປອດໄພ, ມີຄວາມເປັນລະບຽບຮຽບ ຮ້ອຍ, ປົກປັກຮັກສາວັດຖຸຊັບສິນຂອງລັດ, ນິຕິບຸກຄົນ ແລະ ບຸກຄົນ ທີ່ໄດ້ລົງທຶນໃສ່ ໃນເຂດ ແຄມຂອງ ແລະ ບໍລິເວນທາດດອນຈັນ;

18.5 ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ອົງການປົກຄອງນະຄອນຫຼວງວຽງຈັນ.

**ມາດຕາ 19. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

19.1 ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ;

19.2 ຕິດຕາມ, ກວດກາ ແລະ ຕັກເຕືອນ ຜູ້ລະເມີດ ຂໍ້ຕົກລົງສະບັບນີ້ ໃນເຂດແຄມຂອງ ບໍລິ ເວນ ທາດດອນຈັນ ໃນຂອບເຂດບ້ານຂອງຕົນເອງ ແລະ ລາຍງານຕໍ່ອົງການປົກເມືອງທີ່ຕົນເອງສັງກັດ ຊາບຕາມຂັ້ນຕອນ ເພື່ອດໍາເນີນການແກ້ໄຂໃຫ້ທັນການ;

19.3 ເປັນເຈົ້າການ ໃນການປຸກລະດົມປະຊາຊົນໃນການຄຸ້ມຄອງ ແລະ ອະນາໄມເຂດແຄມຂອງ ບໍລິ ເວນທາດດອນຈັນ ໃນຂອບເຂດບ້ານຂອງຕົນເອງ ທີ່ຮັບຜິດຊອບ;

19.4 ເປັນເຈົ້າການຮັກສາຄວາມສະຫງົບ-ປອດໄພ ໃນເຂດແຄມຂອງ ບໍລິເວນທາດດອນຈັນ ຕາມຂອບ ເຂດບ້ານຂອງຕົນເອງ ທີ່ຮັບຜິດຊອບ;

19.5 ປະຕິບັດສິດແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງ ອົງການປົກຄອງເມືອງ.

**ມາດຕາ 20. ການກວດກາ**

20.1 ເຈົ້າຄອງນະຄອນຫລວງວຽງຈັນ ແຕ່ງຕັ້ງຄະນະກວດກາ ການຄຸ້ມຄອງແລະການພັດທະນາເຂດແຄມຂອງ ບໍລິເວນທາດດອນຈັນ ປະກອບດ້ວຍ: ຫົວໜ້າກວດກາ 1 ຕຳແໜ່ງ (ພະນັກງານຂອງລັດ); ຮອງຜູ້ກວດກາ 1 ຕຳແໜ່ງ (ພະນັກງານຂອງລັດ); ກຳມະການກວດກາ ມາຈາກປະຊາຊົນຈຳນວນໜຶ່ງ (ສະມາຄົມສະຖາປະນິກລາວ, ນັກວິສະວະກອນທາງນ້ຳ, ນັກວັດທະນະທຳ ແລະ ນັກທຸລະກິດ);

20.2 ຄະນະກວດກາ ປະຕິບັດໜ້າທີ ແລະ ສິດຂອງຕົນເອງຄື: ຕິດຕາມ,ກວດກາ ແລະ ປະເມີນຜົນ ແຕ່ລະກິດຈະການ ໃນໄລຍະ 6 ເດືອນ ແລະ 1 ປີ ແລ້ວ ນຳເອົາຜົນການກວດກາ ແລະ ປະເມີນຜົນລາຍງານ ຕໍ່ກອງປະຊຸມອົງການປົກຄອງ ແລະ ສະພາປະຊາຊົນຂັ້ນ ນະຄອນຫລວງວຽງຈັນ ແລະ ລາຍງານ ຜົນໃຫ້ລັດຖະບານຊາບ ປີລະ 1 ຄັ້ງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 21. ຂໍ້ຫ້າມ**

21.1 ທຸກການກະທຳທີ່ເປັນການທຳລາຍ ແລະ ແຕະຕ້ອງເຖິງໂຄງສ້າງ ຄູກັນນ້ຳ,ຮາກຖານປ້ອງກັນຕະຝັ່ງ;

21.2 ທຸກໆ ກິດຈະການກໍ່ສ້າງ ຢູ່ນ່ານນ້ຳຂອງ ໃນເຂດແຄມຂອງ ບໍລິເວນທາດດອນຈັນ ທີ່ສ້າງຜົນກະທົບຕໍ່ການປ່ຽນແປງສະພາບຕະຝັ່ງ, ໂຄງສ້າງລະບົບປ້ອງກັນຕະຝັ່ງເຈື່ອນ, ລະບົບນິ ເວດວິທະຍາ, ສະພາບແວດລ້ອມ ຄື: ໂຄງການກໍ່ສ້າງທ່າທຽບເຮືອ, ແພທຽບເຮືອ, ເຮືອນປ່ານ້ຳ, ແລະ ໂຄງການກໍ່ສ້າງອື່ນໆ;

21.3 ລ້ຽງປາກະຊັງຕາມ ໃສ່ນ່ານນ້ຳ ເຂດແຄມຂອງບໍລິເວນທາດດອນຈັນ;

21.4 ສ້າງຕະຫຼາດ ແລະ ຮ້ານຂາຍເຄື່ອງ ໃສ່ເຂດແຄມທາງຂອງສັນຄູກັນນ້ຳ ແລະ ເຂດຄ້ອຍຊັນຂອງຄັນຄູ;

21.5 ການກໍ່ສ້າງ ອາຄານ ຮ້ານຄ້າ, ປ້າຍໂຄສະນາ ແລະ ສິ່ງປຸກສ້າງອື່ນໆ ເປັນລັກສະນະຖາວອນ ມີຄວາມສູງ ໃສ່ແຄມຂອງ ບໍລິເວນທາດດອນຈັນ ທີ່ຈະລັບບັງ ທິວທັດແຄມຂອງ, ໃນກໍລະນີຈຳເປັນປຸກສ້າງ ກໍບໍ່ເກີນທີ່ທາງການອະນຸມັດ ບໍ່ໃຫ້ສູງເກີນຫນ້າພຽງຄັນຄູ (ທາງ);

21.6 ບຸກຄົນ,ນິຕິບຸກຄົນ ແລະ ຜູ້ໄດ້ຮັບສິດສຳປະທານ ກໍ່ສ້າງສິ່ງກີດຂວາງໃສ່ທາງຂຶ້ນ-ລົງ ຫຼື ເຂົ້າ-ອອກຂອງພະຫະນະແລະມວນຊົນ ທີ່ໄດ້ກຳນົດໄວ້ ໃນມາດຕາ 12.5 ແລະ ມາດຕາ 12.6;

21.7 ການກໍ່ສ້າງບ່ອນຈອດລົດຖາວອນ ໃສ່ເຂດຄ້ອຍຊັນຂອງຄັນຄູ;

21.8 ການຖົມດິນ ແລະ ຖິ້ມຂີ້ເຫຍື້ອ ໃສ່ບໍລິເວນຫາດຊາຍຂອງເຂດແຄມຂອງ ບໍລິເວນທາດດອນຈັນ;

21.9 ທຸກກິດຈະການ ຂຸດຄົ້ນ ຫີນແຮ່ - ຊາຍ ແລະ ດິນດຳ ຫຼື ການສ້າງບ່ອນເກັບມ້ຽນ ຫີນແຮ່ - ຊາຍ ແລະ ດິນດຳ ໃນເຂດແຄມຂອງ ບໍລິເວນທາດດອນຈັນ;

21.10 ສຳລັບຂອບສວນເຈົ້າອານຸວົງ ຕິດກັບທາງຍ່າງ ຂອງຖະໜົນເຈົ້າຟ້າງຸ້ມ ແມ່ນຫ້າມຈອດລົດ ແລະ ຫ້າມ ຂາຍເຄື່ອງກິນ ຢູ່ບໍລິເວນດັ່ງກ່າວເດັດຂາດ;

21.11 ສ້າງຮ້ານຂາຍເຄື່ອງກໍ່ສ້າງ,ສາງເກັບສິນຄ້າທຸກປະເພດ,ປ້ຳນ້ຳມັນ,ປ້າຍໂຄສະນາ ແລະ ອື່ນໆ ທີ່ເຫັນວ່າບໍ່ສວຍງາມ ແລະ ອາດເປັນອັນຕະລາຍຕໍ່ປະຊາຊົນ ແລະ ນັກທ່ອງທ່ຽວ ໃສ່ບໍລິເວນຫາດຊາຍຂອງເຂດແຄມຂອງ ບໍລິເວນທາດດອນຈັນ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຜົນງານໃນການປະກອບສ່ວນເຂົ້າໃນການຈັດ ຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເກີດຜົນອັນສູງສຸດຕໍ່ການພັດທະນາ ແລະ ສ້າງສາປະເທດຊາດ ຈະໄດ້ຮັບການຍ້ອງຍໍ ແລະປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

**ມາດຕາ 23. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ປັບໄໝ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24. ການຈັດຕັ້ງປະຕິບັດ**

ບັນດາໂຄງການ ແລະ ກິດຈະການຕ່າງໆ ທີ່ໄດ້ຮັບອະນຸຍາດ ຫຼື ມີຢູ່ກ່ອນການປະກາດໃຊ້ ຂໍ້ຕົກລົງສະບັບນີ້ໃຫ້ສືບຕໍ່ຈັດຕັ້ງປະຕິບັດ, ໃນກໍລະນີຖ້າຫາກຂັດກັບຂໍ້ຕົກລົງສະບັບນີ້ ຕ້ອງດັດແປງແກ້ໄຂໃຫ້ຖືກຕ້ອງແລະສອດຄ່ອງ ກັບຂໍ້ຕົກລົງສະບັບນີ້ ຈຶ່ງສາມາດດຳເນີນກິດຈະການຕໍ່ໄປໄດ້. ບັນດາເມືອງ, ພະແນກການ,ອົງການລັດທຽບເທົ່າພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ປະສານສົມທົບກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 25. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ດຣ.ສິນລະວົງ ຄຸດໄພທູນ

**ບ່ອນນຳສົ່ງ:**

- ເຈົ້າຄອງ-ຮອງເຈົ້າຄອງ ນວ — 03 ສະບັບ;
- ສຳນັກງານປະທານປະເທດ — 01 ສະບັບ;
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — 01 ສະບັບ;
- ກະຊວງໄຍທາທິການ ແລະ ຂົນສົ່ງ — 01 ສະບັບ;
- ສະພາປະຊາຊົນ ນວ — 01 ສະບັບ;
- ເມືອງສີສັດຕະນາກ ນວ — 01 ສະບັບ;
- ເມືອງຈັນທະບູລີ ນວ — 01 ສະບັບ;
- ເມືອງສີໂຄດຕະບອງ ນວ — 01 ສະບັບ;
- ພະແນກໂຍທາທິການ ແລະ ຂົນສົ່ງ — 01 ສະບັບ;
- ເກັບມ້ຽນ — 06 ສະບັບ.